ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

**ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ**

ໂຄງການສິ່ງແວດລ້ອມ ແລະ ສັງຄົມຢູ່ ສປປ ລາວ ໄລຍະ 2 — ເລກທີ: 0683/ກປສ.ຫກ.

ສັນຍາເລກທີ : — ວັນທີ : 20 ກັນຍາ 2017

1. ENS.HP/G01 ; 2. ENS.XK/G01 ; 3. ENS.LPB/G01 ; 4. ENS.VTE/G01

5. ENS.BLX/G01 ; 6. ENS.KHM/G01 ;7. ENS.SVK/G01;

# ຫນັງສືແຈ້ງເຊີນປະມູນ

1. ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ຮັບອະນຸມັດງົບປະມານຈາກທະນາຄານໂລກ ປະຈຳປີ 2017 ຜ່ານກົນໄກການໃຫ້ທຶນ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ເພື່ອຈັດຕັ້ງປະຕິບັດໂຄງການ ສິ່ງແວດລ້ອມ ແລະ ສັງຄົມຢູ່ ສປປ ລາວ ໄລຍະ 2. ຫກປສ ມີຄວາມປະສົງນຳໃຊ້ງົບປະມານສ່ວນໜຶ່ງ ເພື່ອດຳເນີນການປະມູນຈັດຊື້ລົດກະບະ 4x4 ຈຳນວນ 7 ຄັນ, ດ້ວຍການດຳເນີນການປະມູນເປີດກວ້າງ.
2. ກອງທຶນປົກປັກຮັກສາສິ່ງແວດລ້ອມ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ສຳລັບ-ສະຫນອງລົດກະບະ 4x4, ຈຳນວນ 7 ຄັນ. ໄລຍະການຈັດສົ່ງແມ່ນ 3 ເດືອນ, ພາຍຫລັງທີ່ບໍລິສັດໄດ້ຮັບໃບແຈ້ງຮັບຮອງຜູ້ຊະນະການປະມູນ.
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004 ແລະ ລະບຽບການຈັດຕັ້ງປະຕິບັດດຳລັດ, ສະບັບເລກທີ 063/ກງ, ລົງວັນທີ 12 ມີນາ 2004 ແລະ ສະບັບດັດແກ້ ເລກທີ 0861/ກງ, ລົງວັນທີ 05 ພຶດສະພາ 2009.
4. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ຖືກຕ້ອງຕາມກົດຫມາຍທີ່ກ່ຽວພັນກັບການສະຫນອງສິນຄ້າ, ອຸປະກອນ ແລະ ການບໍລິການທີ່ຕ້ອງການ ເຊິ່ງແຕ່ລະບໍລິສັດຕ້ອງປະກອບເອກະສານທາງດ້ານກົດໝາຍເຊັ່ນ: ໃບທະບຽນທຸລະກິດ (ຊັ້ນ 1), ໃບມອບພັນທະອາກອນປີ 2016, ໃບອະນຸຍາດສືບຕໍ່ດຳເນີນທຸລະກິດປະຈຳປີ 2017 ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.
5. ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່: ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ມີສຳນັກງານຕັ້ງຢູ່: ຊັ້ນ 2, ຕຶກ 100, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ນະຄອນຫລວງວຽງຈັນ, ສປປ ລາວ, ຕູ້ໄປສະນີ: 7647, ເບີໂທລະສັບ: 856-021252739, ແຟັກ: 856-021252741 ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ຕາມທີ່ຢູ່ລະບຸໄວ້ຂ້າງເທິງ, ໃນໂມງລັດຖະການ.
6. ບໍລິສັດໃດ ທີ່ຕ້ອງການເອກະສານປະມູນຄົບຊຸດ ຕ້ອງຍື່ນຫນັງສືສະເຫນີຫາ ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ທີ່ມີສຳນັກງານຕັ້ງຢູ່: ຊັ້ນ 2, ຕຶກ 100, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແຕ່ວັນທີ 20 ກັນຍາ 2017 ໃນໂມງລັດຖະການເປັນຕົ້ນໄປ (ໂດຍບໍ່ໄດ້ເສຍຄ່າ).
7. ຊອງປະມູນຕ້ອງສົ່ງຕາມທີ່ຢູ່ລຸ່ມນີ້,ໃນເວລາ ຫລືກ່ອນເວລາ 14:00 ໂມງ ຂອງວັນທີ 8 ພະຈິກ 2017. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ, ຂອງວັນທີ 8 ພະຈິກ 2017, ສະຖານທີ: ຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ສະຖານທີ່ຄຸ້ມສຳນັກງານນາຍົກລັດ ຖະມົນຕີ, ຊັ້ນ 2, ຕຶກ 100, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ນະຄອນຫລວງວຽງຈັນ, ສປປ ລາວ, ໂດຍຊ້ອງຫນ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ. KK

**ຫົວໜ້າຫ້ອງການ**

**ກອງທຶນປົກປັກຮັກສາສິ່ງແວດລ້ອມ**

ຫ້ອງວ່າການລັດຖະບານ ກອງທຶນ ປົກປັກຮັກສາ ສິ່ງແວດລ້ອມ

ຄຳປະດິດ ຄຳມູນເຮືອງ